ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ກົມແຜນການ ແລະ ການເງິນ

ເລກທີ: 3946/ກຜງ.ສຖຕ

ນະຄອນຫຼວງວຽງຈັນ, ວັນທີ: 27 ຕຸລາ 2022.

ໜັງສືແຈ້ງເຊີນເຂົ້າຮ່ວມປະມູນເປີດກວ້າງ
ສໍາລັບພັດທະນາລະບົບປະກອບເຂົ້າໃນກິດຈະກໍາ
ທັນລະບົບຂໍ້ມູນ ໄອຊີທີ ຂອງ ສປປ ລາວ ເປັນທັນສະໄໝ (MSS)

ກົມແຜນການ ແລະ ການເງິນ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ຊຶ່ງໄດ້ຮັບອານຸມັດງົບປະມານຊ່ວຍເຫຼືອໃນກອບການຮ່ວມມື ຂອງອົງການໂທລະຄົມມະນາຄົມປະຈໍາພາກພື້ນ ອາຊີ - ປາຊີຟິກ (Asia - Pacific Telecommunity) ພາຍໃຕ້ງົບປະມານສົມທົບພິເສດຈາກລັດຖະບານ ສປ ຈີນ. ມີຈຸດປະສົງເພື່ອສັນຫາບໍລິສັດ/ລັດວິສາຫະກິດ/ຮ້ານ ທີ່ມີຄຸນວຸດທິ, ຄວາມສາມາດໃນການສະໜອງລະບົບຊອບແວປະຕິບັດງານ ຂອງລະບົບຂໍ້ມູນ ສະຖິຕິທັນເປັນທັນສະໄໝ ຂອງຂະແໜງເຕັກໂນໂລຊີ ແລະ ການສື່ສານ, ໄລຍະການພັດທະນາລະບົບເປັນເວລາ 60 ວັນ (22 ພະຈິກ 2022 ຫາ 20 ມັງກອນ 2023) ດັ່ງມີລາຍລະອຽດລຸ່ມນີ້:

1. ການປະມູນນີ້ຈະດໍາເນີນຕາມ ລະບຽບກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
2. ຂໍເຊີນ ບໍລິສັດ/ລັດວິສາຫະກິດ/ຮ້ານ ທີ່ມີຄວາມສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ຄະນະຮັບຜິດຊອບຈັດຈ້າງ ເບີໂທຕິດຕໍ່: 020 22599556 ເລີ່ມຂາຍຊອງແຕ່ວັນທີ 28 ຕຸລາ 2022 ຫາ ວັນທີ 21 ພະຈິກ 2022 ໃນລາຄາຊຸດລະ 1,000,000 ກີບ (ໜຶ່ງລ້ານກີບ) ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ.
3. ຊອງປະມູນຕ້ອງສົ່ງທີ່ຫ້ອງປະຊຸມຊັ້ນ 03 ຕຶກກະຊວງເຕັກໂນໂລຊີ ແລະ ການສື່ສານ, ກ່ອນເວລາ 09:00 ໂມງ, ຂອງວັນທີ 21 ພະຈິກ 2022, ທີ່ກໍານົດເປັນເວລາຊ້າສຸດໃນການຍື່ນຊອງປະມູນ. ຊອງປະມູນທີ່ສົ່ງມາທາງເອເລັກໂຕຼນິກຈະບໍ່ອະນຸຍາດ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ທຸກຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນທີ 21 ພະຈິກ 2022 ຢູ່ທີ່ ຫ້ອງປະຊຸມຊັ້ນ 03 ຂອງຕຶກກະຊວງເຕັກໂນໂລຊີ ແລະ ການສື່ສານ, (ຕັ້ງຢູ່: ບ້ານສີສະເກດ) ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນໍາ.
4. ທຸກຊອງປະມູນຕ້ອງປະກອບເອກະສານຕາມແບບຟອມທີ່ໄດ້ກໍານົດໃນເອກະສານການປະມູນຢ່າງຄົບຖ້ວນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານ ເພື່ອເຂົ້າຮ່ວມປະມູນເປີດກວ້າງຄັ້ງນີ້ດ້ວຍ.

ຫົວໜ້າຄະນະຈັດຊື້

ຮອງຫົວໜ້າກົມ

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ກົມແຜນການ ແລະ ການເງິນ

ເພົານະຄອນ ເພັດວິຫານ